# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 27 ກໍຣະກະດາ 2008 ( 27-6-2008 )

---

## ສວັນອັນແທ້ຈິງເປັນແນວໃດ?:

**ຂໍ້ພຣະຄັມພີໃນບົດຮຽນ:** (ພຣະນິມິດ 21:1-5, 22-27; 22:1-5)

**ຄຳຖາມແຫ່ງຊີວິດ:** ເມືອງສວັນຈະເປັນລັກສະນະໃດ?

**ພຣະຄັມພີແຫ່ງຄວາມຈິງ:** ສວັນຈະເຕັມໄປດ້ວຍສະງ່າຣາສີຂອງການປາກົດຕົວຂອງພຣະເຢຊູຄຣິດ ແລະພຣະພອນຂອງພຣະເຈົ້າ ປາສຈາກປັນຫາຕ່າງໆ ທີ່ມີຢູ່ໃນໂລກປະຈຸບັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອໃຫ້ທ່ານດຳຣົງຊີວິດດ້ວຍຄວາມໝັ້ນໃຈໂດຍ:

- ສະແດງໃຫ້ເຫັນຄວາມແຕກຕ່າງ, ຕາມທັມມະດາຂອງຄວາມເຂົ້າໃຈຜິດເຣື່ອງສວັນທີ່ພຣະຄັມພີໄດ້ບັນລະຍາຍເຣື່ອງສວັນເອົາໄວ້; ແລະ
- ການສຳແດງຂອງພຣະເຈົ້າທີ່ໃຫ້ເຫັນຄວາມຫວັງອັນຄົບບໍຣິບູນຂອງສວັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນື່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ນຳພານັກຮຽນໃຫ້ເອົາໃຈໃສ່ **ໃນການດຳເນີນຊີວິດດ້ວຍຄວາມເຂົ້າໃຈເຖິງບັ້ນສຸດທ້າຍ.**
- ຄຳຖາມ: ສວັນຈະເປັນຄືຫຍັງ? ສົນທະນາວ່າມີສິ່ງໃດແດ່ທີ່ " ສັງຄົມວັທນະທັມຂອງພວກເຮົາໄດ້ພາກັນເຂົ້າໃຈຜິດເຣື່ອງຂອງສວັນ.
- ບົດຮຽນມື້ນີ້ຈະຊ່ອຍໃຫ້ພວກເຮົາຮູ້ຈັກວ່າພຣະຄັມພີໄດ້ເວົ້າເຖິງເຣື່ອງສວັນວ່າຢ່າງໃດ. ບໍ່ເປັນຫຍັງວ່າພວກເຮົາຈະເຊື່ອໃນເຣື່ອງສວັນເປັນຢ່າງໃດ ຫລືເຊື່ອຕາມສັງຄົມວັທນະທັມຂອງພວກເຮົາໄດ້ສອນກັນມາວ່າສວັນເປັນຢ່າງໃດ, ສວັນແມ່ນພຣະເຈົ້າເປັນສູນກາງ! ໃຫ້ຂຽນໂຕໜັງສືໃຫຍ່ໃສ່ກະດານດັ່ງນີ້:

"ພຣະເຈົ້າເປັນສູນກາງ" !

1. <u>ທ້ອງຟ້າ (ສວັນ) ໃໝ່</u> : (ພຣະນິມິດ 21:1-5)

- ຊີ້ແຈງເຖິງ **ພຣະເຈົ້າຊົງສະຖິດຢູ່ໃນສວັນ** ແລະຊີ້ໃຫ້ເຫັນຊື່/ຕຳແໜ່ງບໍຣິສຸດຂອງພຣະອົງ ແລະພັລມາເຣື່ອງສິພຣະທັດຂອງພຣະເຈົ້າ.
- ໃຫ້ນັກຮຽນອາາສມັກອ່ານ ພຣະນິມິດ 21:1-5
- ໃຫ້ຂຽນຄຳວ່າ ສວັນ ໃສ່ກະດານ ເຮັດເປັນສອງຄໍລັມຄື: 1. ເກົ່າ 2. ໃໝ່ ແລ້ວໃຫ້ນັກຮຽນ ສເນີຄຳເວົ້າຕ່າງໆ ທີ່ຢູ່ໃນ ພຣະນິມິດບົດທີ 21 ຂໍ້ທີ 4 ຂຽນລົງກ້ອງຂອງຄຳວ່າ (ເກົ່າ) ຫລື (ໃໝ່) ນັ້ນວ່າມີຫຍັງແດ່ທີ່ພຣະຄັມພີໄດ້ໃຫ້ຄວາມຫວັງອັນໃດແດ່ແກ່ພວກເຮົາ? ຕາມຂໍ້ທີ່ສເນີມາມີຫຍັງແດ່ທີ່ຈະເປັນສິ່ງໃໝ່ໃນສວັນເຊັ່ນຕົວຢ່າງ, ຄຳຖາມ: ຈະມີຫຍັງເກີດຂຶ້ນກ່ຽວກັບນ້ຳຕາຂອງພວກເຮົາ? (ພຣະເຈົ້າຈະຊົງເຊັດນ້ຳຕາທຸກງຢົດອອກ) ຄວາມຕາຍ, ຄວາມເຈັບປວດເດ?
- ສລຸບວ່າ ທີ່ຟ້າໃໝ່ ແຜ່ນດິນໃໝ່ນັ້ນ ທະເລຈະບໍ່ມີອີກ. ທີ່ນັ້ນຈະມີເຢຣູຊາເລັມໃໝ່ ສິ່ງໃໝ່ໆ ເຫລົ່ານີ້ເປັນບັນລັງຂອງພຣະເຈົ້າ.
- ຄຳຖາມ: ພຣະເຈົ້າຈະຊົງສະຖິດຢູ່ກັບພວກເຮົາ ແລະພຣະອົງເປັນພຣະເຈົ້າຂອງພວກເຮົານັ້ນໝາຍຄວາມວ່າຢ່າງໃດ?
- ໃນເມື່ອຄວາມເຈັດປວດເຂົ້າມາໃນຊີວິດຂອງພວກເຮົາ, ພວກເຮົາສາມາດຮູ້ໄດ້ວ່າມັນມາພຽງຊົ່ວຄາວ ແລະຈະບໍ່ມີໃນສວັນ, ພວກເຮົາຈະຮູ້ວ່າພຣະເຈົ້າບໍ່ໄດ້ກີດກັ້ນສວັນ ສິ່ງທີ່ພວກເຮົາຕ້ອງທຳຄື ສ້າງຄວາມສັມພັນກັບພຣະອົງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: (ພຣະນິມິດ 21:1-5)

1. ສວັນຈະເປັນຄືແນວໃດ?
2. ເພາະວ່າສວັນເປັນທີ່ປະທັບຂອງພຣະເຈົ້າ, ທ່ານຈະອະທິບາຍຄວາມແຕກຕ່າງຂອງໂລກເຮົາປະຈຸບັນ ກັບສວັນຢ່າງໃດ?
3. ໃນເມື່ອທ່ານໄດ້ມີປະສົບການກັບຄວາມເຈັບປວດ, ຄວາມໂສກເສົ້າ, ແລະຄຳສັນຍາຂອງງສວັນໄດ້ໃຫ້ຄວາມຫວັງແກ່ທ່ານແນວໃດ?

2. **<u>ສະຫວ່າຣາສີ:</u>** (ພຣະນິມິດ 21:22-27)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 21:22-27
- ຂໍໃຫ້ນັກຮຽນນຶກສັງເກດເບິ່ງຫ້ອງນະມັສການ ຫລືໂບດ ຫລືສະຖານທີ່ທຸຣະກິຈທີ່ໃຫຍ່ ແລະງາມທີ່ສຸດທີ່ເຂົາເຈົ້າບໍ່ເຄີຍເຫັນມາກ່ອນ. ແລ້ວຖາມເຂົາເຈົ້າວ່າ: ຄວາມສວຍງາມໃນແຜ່ນດິນໂລກນີ້ ຖ້າຈະເອົາໄປປຽບທຽບກັບຄວາມຮຸ່ງເຮືອງສວຍງາມຂອງສວັນຈະເປັນຢ່າງໃດ?
- ທ່ານສາມາດວາດພາບເບິ່ງພຣະວິຫານທີ່ພຣະເຈົ້າໄດ້ຊົງສ້າງດ້ວຍພຣະອົງນັ້ນສວຍງາມຂນາດໃດ?
- ໃຊ້ແວ່ນແຍງໃສ່ຝາ, ເພດານ, ພື້ນ ເພື່ອໃຫ້ເຫັນຮູບພາບໃນແວ່ນ. ແລ້ວຖາມນັກຮຽນວ່າ: ແວ່ນນັ້ນໄດ້ສ່ອງແສງໄປໃສ່ສິ່ງເຫລົ່ານັ້ນແນວໃດ? ນີ້ເປັນການສະທ້ອນໃຫ້ເຫັນຊີວິດຂອງພວກເຮົາໂດຍພຣະເຈົ້າ; ພຣະອົງຊົງເປັນແສງສວ່າງທີ່ສ່ອງມາເຖິງພວກເຮົາ. ແສງສວ່າງທີ່ພວກເຮົາມີ (ໄດ້ຮັບ) ນັ້ນເປັນຂອງປະທານມາຈາກພຣະເຈົ້າ.

- ເອົາໜັງສືພິມ ຫລື ປື້ມວາຣະສານມາຈິກເປັນແຜ່ນໆມາເພື່ອສະແດງໃຫ້ເຫັນຄວາມສັບສົນ, ການແບ່ງຊັ້ນວັນນະ, ການແຕກແຍກ ຫລືການມີອະຄະຕິໃນໂລກ.
- ຖາມວ່າ: ໃນສວັນຈະມີສິ່ງຕ່າງໆ ເຫລົ່ານີ້ບໍ່?

ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:: (ພຣະນິມິດ 21:22-27)
1. ທ່ານຈະພັລນາເຖິງຄວາມສວຍງາມ ແລະສງ່າຣາສີຂອງສວັນແນວໃດ?
2. ພຣະຜູ້ເປັນເຈົ້າຊົງເປັນວິຫານໃນນະຄອນນັ້ນມີຄວາມໝາຍສຳລັບທ່ານແນວໃດ?
3. ວົງດົນຕຣີໃໝ່ ຫລືເພງສັຣເສີນໄດ້ເຮັດໃຫ້ທ່ານຄິດເຖິງເຣື່ອງສວັນແນວໃດ?
4. ຮູບແຕ້ມ ຫລືສິ່ງທີ່ແກະສລັກນັ້ນແມ່ນຫຍັງ?
5. ທ່ານຈະຕອບຄຳຖາມທີ່ວ່າ: ຊື່ຂອງທ່ານໄດ້ຈົດໄວ້ໃນບັນຊີແຫ່ງຊີວິດຂອງພຣະເມສານ້ອຍແລ້ວບໍ່? ແນວໃດ?

### 3. ຄວາມຊື່ນຊົມຍິນດີ: (ພຣະນິມິດ 22:1-5

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 22:1-5
- ໃຫ້ບອກຊື່ແມ່ນ້ຳໃນອະເມຣິກາເໜືອມາ (ເຊັ່ນ ແມ່ນ້ຳມິດຊີຊະບປີ, ໂຄໂລຣາໂດ, ແລະ ຣີໂອກແຣັນເດີ) ແລະຊອກຫາລະບຸແຫລ່ງກຳເນີດເກີດມາຂອງມັນ. ເພາະທຸກສິ່ງມີແຫລ່ງກຳເນີດເກີດຂື້ນ - ມີການເລີ້ມຕົ້ນ ແລະມີການຈັດຫາ. ແມ່ນຫຍັງເປັນແຫລ່ງກຳເນີດຂອງແມ່ນ້ຳແຫ່ງຊີວິດໃນສວັນ?
- ເສຖກິດ ການເມືອງ ພາຣະກິຈສ່ວນຕົວ ແລະລະຫວ່າງຊາດຕໍ່ຊາດຈະມີການປ່ຽນແປງແນວໃດ?
- ໃຫ້ຂຽນສອງປໂຍກຈາກຂໍ້ 3-4, ນີ້ໃສ່ກະດານ: ຜູ້ຮັບໃຊ້ພຣະອົງຈະຮັບໃຊ້ພຣະອົງ ແລະ ເຂົາຈະເຫັນໜ້າຂອງພຣະອົງ. **ຂ້າພະເຈົ້າເດຈະຮັບໃຊ້ພຣະອົງຢ່າງໃດ?**

ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: 22:1-5)
1. ການລະນຶກເຖິງສະພາບໃນສວັນນັ້ນ, ແມ່ນຫຍັງເປັນຕົ້ນກຳເນີດຂອງພລັງອຳນາດ, ຕົ້ນກຳເນີດຂອງສະງ່າຣາສີ ແລະເປັນຈຸດລວມຂອງທຸກໆ ກິຈກັມ?
2. ທ່ານຈະປຽບທຽບການອວຍພຣະພອນ ແລະການປະທານຄວາມຊື່ນຊົມຍິນດີທີ່ເປັນຂອງຂວັນຈາກພຣະເຈົ້າ, ຊົ່ງດຽວນີ້ ໂດຍການໃຫ້ມີສ່ວນໃນສວັນນັ້ນຢ່າງໃດ?
3. ທັສນະຄະຕິໃນການຮັບໃຊ້ພຣະເຈົ້າຂອງທ່ານໃນປະຈຸບັນນີ້ແມ່ນຫຍັງ? ຈະປຽບທຽບກັບສະພາບການຮັບໃຊ້ໃນສວັນແນວໃດ?

## ບົດຮຽນພຣະຄັມພີແຫ່ງຄວາມຈິງ

- ໃນຂັ້ນສຸດທ້າຍຂອງການໄຖ່ຈະໄດ້ຄົບບໍຣິບູນ ແລະຈະໄດ້ຢູ່ຊ້ອງພຣະພັກຂອງພຣະເຈົ້າ.
- ສັດຕຣູທັງຫລາຍ ແລະຜູ້ກະທຳຊົ່ວຮ້າຍພ້ອມທັງຜູ້ບໍ່ເຊື່ອທັງຫລາຍ,ແລະຕົກຢູ່ໃນຄວາມບາບ ເຂົາກໍຈະມາທາງດຽວກັບພວກເຮົາ ແລ້ວເຂົາຈະຖືກແຍກອອກໄປຈາກພວກເຮົາຊົ່ວນິຣັນດອນ.